# ເຂົາເຈົ້າແມ່ນໃຜ?

**ພະຍານພະເຢໂຫວາ**ຕ້ອງການໃຫ້ເຈົ້າຮູ້ຈັກກັບເຂົາເຈົ້າຫຼາຍຂຶ້ນ. ເຈົ້າອາດເຄີຍພົບເຂົາເຈົ້າໃນຖານະເປັນເພື່ອນບ້ານຫຼືເປັນເພື່ອນຮ່ວມງານຫຼືພົວພັນນຳເຂົາເຈົ້າໃນການດຳເນີນຊີວິດປະຈຳວັນ. ເຈົ້າອາດເຫັນເຂົາເຈົ້າກຳລັງສະເໜີວາລະສານໃຫ້ກັບຜູ້ຄົນທີ່ຜ່ານໄປມາຕາມຖະໜົນ. ຫຼືອາດເຄີຍລົມກັບເຂົາເຈົ້າສັ້ນໆຢູ່ໜ້າປະຕູເຮືອນ.

ທີ່ຈິງ ພະຍານພະເຢໂຫວາສົນໃຈແລະເປັນຫ່ວງຄວາມເປັນຢູ່ຂອງເຈົ້າ. ເຂົາເຈົ້າຢາກເປັນໝູ່ແລະຢາກບອກເຈົ້າຕື່ມອີກກ່ຽວກັບຕົວເຂົາເຈົ້າ, ຄວາມເຊື່ອຂອງເຂົາເຈົ້າ, ອົງການຂອງເຂົາເຈົ້າ, ລວມທັງຄວາມຮູ້ສຶກທີ່ເຂົາເຈົ້າມີຕໍ່ຜູ້ຄົນແລະໂລກເຊິ່ງເຮົາທຸກຄົນອາໄສຢູ່. ເພື່ອບັນລຸຈຸດມຸ່ງໝາຍນີ້ ເຂົາເຈົ້າຈຶ່ງໄດ້ຈັດຕຽມຈຸນລະສານເຫຼັ້ມນີ້ເພື່ອເຈົ້າ.



*ເຂົາເຈົ້າສົນໃຈເຈົ້າ*

ໃນຫຼາຍດ້ານພະຍານພະເຢໂຫວາບໍ່ຕ່າງກັນກັບຄົນອື່ນໆ ເຂົາເຈົ້າມີບັນຫາຄືກັນ ເຊັ່ນ ດ້ານເສດຖະກິດ, ດ້ານຮ່າງກາຍ, ດ້ານອາລົມ. ມີລາງເທື່ອເຂົາເຈົ້າກໍຜິດພາດເພາະເປັນຄົນທີ່ບໍ່ສົມບູນແບບຈຶ່ງຜິດພາດໄດ້. ແຕ່ເຂົາເຈົ້າພະຍາຍາມຖອດຖອນບົດຮຽນຈາກປະສົບການຂອງຕົນແລະດຸໝັ່ນໃນການສຶກສາຄຳພີໄບເບິນເພື່ອເຫັນຈຸດທີ່ຕ້ອງປັບປຸງຕົນເອງ. ເຂົາເຈົ້າອຸທິດຕົວແດ່ພະເຈົ້າເພື່ອເຮັດຕາມພະປະສົງຂອງພະອົງແລະທຸ່ມເທຕົນເອງໃຫ້ສົມກັບທີ່ໄດ້ອຸທິດຕົວ. ໃນການດຳລົງຊີວິດທຸກຢ່າງ ເຂົາອີງຕາມການຊີ້ນຳຈາກພະຄຳຂອງພະເຈົ້າແລະພະວິນຍານບໍລິສຸດຂອງພະອົງ.

ເຂົາເຈົ້າຖືວ່າຄວາມເຊື່ອບໍ່ຄວນມາຈາກການຄາດຄະເນຫຼືເປັນຫຼັກຂໍ້ເຊື່ອທາງສາສະໜາຂອງມະນຸດເທົ່ານັ້ນ ແຕ່ສິ່ງສຳຄັນຄວາມເຊື່ອຂອງຕົນຕ້ອງໄດ້ອີງໃສ່ຄຳພີໄບເບິນເປັນຫຼັກ. ເຂົາເຈົ້າຮູ້ສຶກເຊັ່ນດຽວກັບອັກຄະສາວົກໂປໂລເມື່ອທ່ານກ່າວໂດຍການດົນໃຈດັ່ງນີ້: “ໃຫ້ເຂົາຍອມເຫັນພະເຈົ້າເປັນສັດຊື່ ແລະທຸກຄົນເປັນຄົນຕົວະ.”* (ໂລມ 3:4) ໃນເລື່ອງຄຳສອນທີ່ສະເໜີວ່າເປັນຄວາມຈິງຕາມຫຼັກຄຳພີໄບເບິນ ພະຍານພະເຢໂຫວາເຫັນດີເຫັນພ້ອມກັບການກະທຳຂອງຊາວເມືອງເບເລ

---

* ນອກຈາກມີການລະບຸໄວ້ເປັນຢ່າງອື່ນ ຂໍ້ພະຄຳພີທີ່ຍົກມາກ່າວແມ່ນມາຈາກພະຄຳພີໄບເບິນສະບັບ *biFgn*-LA. ຕົວຫຍໍ້ *ທ.ປ.* ໝາຍເຖິງ*ພະຄຳພີຂອງຊາວຄຶດພາສາຂອງຄົນທົ່ວໄປ.* ຕົວຫຍໍ້ *ລ.ມ.* ໝາຍຄວາມວ່າຂໍ້ນັ້ນແປມາຈາກ*ພະຄຳພີບໍລິສຸດສະບັບແປໂລກໃໝ່* (ພາສາອັງກິດ).

*ເຂົາເຈົ້າອຸທິດຕົວແດ່ພະເຈົ້າ ເພື່ອເຮັດຕາມພະປະສົງຂອງພະອົງ*

ເຊິ່ງເມື່ອໄດ້ຍິນໂປໂລປະກາດ: "ເຂົາໄດ້ຮັບເອົາຄຳສອນດ້ວຍໃຈເຫລື້ອມໃສແທ້ ແລະໄດ້ຊອກຫາໃນພະຄຳພີທຸກວັນວ່າຂໍ້ຄວາມນີ້ເປັນຢ່າງນັ້ນຫລື." (ກິດຈະການ 17:11) ພະຍານພະເຢໂຫວາເຊື່ອວ່າ ຫລັກຄຳສອນຂອງທຸກສາສະຫນາຄວນໄດ້ຮັບການກວດກາວ່າສອດຄ່ອງກັບພະຄຳພີທີ່ມີຂຶ້ນໂດຍການດົນໃຈຫລືບໍ່ ບໍ່ວ່າຄຳສອນນັ້ນຈະມາຈາກເຂົາເຈົ້າຫລືຈາກຜູ້ອື່ນ. ເຂົາເຈົ້າເຊີນເຈົ້າ ຫລືກະຕຸ້ນເຈົ້າໃຫ້ເຮັດເຊັ່ນນີ້ເມື່ອສົນທະນາກັບເຂົາເຈົ້າ.

ເນື່ອງດ້ວຍເຫດນີ້ ຈຶ່ງເຫັນໄດ້ຊັດວ່າພະຍານພະເຢໂຫວາເຊື່ອວ່າຄຳພີໄບເບິນເປັນພະຄຳຂອງພະເຈົ້າ. ເຂົາເຈົ້າຖືວ່າທັງ 66 ພະທຳນີ້ມີຂຶ້ນໂດຍການດົນໃຈແລະມີຄວາມຖືກຕ້ອງທາງປະຫວັດສາດ. ສ່ວນທີ່ໂດຍທົ່ວໄປເອີ້ນກັນວ່າ ພັນທະສັນຍາໃຫມ່ ເຂົາເຈົ້າເອີ້ນວ່າພະຄຳພີຄລິດສະຕຽນພາກພາສາກະເລັກ ແລະເອີ້ນພັນທະສັນຍາເດີມວ່າ ພະຄຳພີພາກພາສາເຫບເລີ. ເຂົາເຈົ້າເຊື່ອຖືທັງພາກພາສາກະເລັກແລະພາກພາສາເຫບເລີ ແລະເຊື່ອຂໍ້ຄວາມເຫລົ່ານັ້ນຕາມຕົວອັກສອນ ເວັ້ນແຕ່ເມື່ອຖ້ອຍຄຳຫລືເນື້ອໃນນັ້ນຈະບົ່ງຊີ້ຢ່າງຊັດເຈນວ່າຂໍ້ຄວາມເຫລົ່ານັ້ນມີຄວາມຫມາຍເປັນໄນຫລືເປັນສັນຍະລັກ. ເຂົາເຈົ້າເຂົ້າໃຈວ່າຄຳພະຍາກອນຫລາຍຂໍ້ໃນຄຳພີໄບເບິນສຳເລັດເປັນຈິງໄປແລ້ວ ຫລາຍຂໍ້ກຳລັງສຳເລັດເປັນຈິງ ແລະຍັງມີຂໍ້ອື່ນອີກທີ່ຈະສຳເລັດເປັນຈິງ.

*ເຂົາເຈົ້າເຊື່ອວ່າຄຳພີໄບເບິນ ເປັນພະຄຳຂອງພະເຈົ້າ*

## ຊື່ຂອງເຂົາເຈົ້າ

ພະຍານພະເຢໂຫວາບໍ? ແມ່ນແລ້ວ ເຂົາເຈົ້າເອີ້ນຕົວເອງແບບນັ້ນ. ຊື່ແບບພັນລະນານີ້ ຊີ້ບອກວ່າເຂົາເຈົ້າເປັນພະຍານກ່ຽວກັບພະເຢໂຫວາ ກ່ຽວກັບຄວາມເປັນພະເຈົ້າຂອງພະອົງ ແລະກ່ຽວກັບພະປະສົງຂອງພະອົງ. ຄຳວ່າ "ພະເຈົ້າ" "ພະອົງເຈົ້າ" ແລະ "ພະຜູ້ສ້າງ" ຄືກັບຄຳວ່າ "ປະທານາທິບໍດີ" "ກະສັດ" ແລະ "ນາຍພົນ" ເປັນຄຳທີ່ບົ່ງບອກເຖິງຕຳແຫນ່ງເຊິ່ງໃຊ້ກັບຫລາຍບຸກຄົນ. ແຕ່ວ່າ "ເຢໂຫວາ" ເປັນຊື່ສະເພາະເຊິ່ງຫມາຍເຖິງພະເຈົ້າອົງມີລິດທານຸພາບທຸກປະການແລະເປັນພະຜູ້ສ້າງເອກະພົບ. ຄຳເພງ 83:18 ສະແດງເຖິງເລື່ອງນີ້ໂດຍບັນທຶກວ່າ "ໃຫ້ເຂົາຮູ້ຈັກວ່າພະເຈົ້າຜູ້ມີນາມຊື່ວ່າພະເຢໂຫວາ ອົງດຽວເປັນພະເຈົ້າອົງສູງສຸດເທິງແຜ່ນດິນທັງສິ້ນ."



*ຊື່ຂອງພະເຈົ້າໃນພາສາເຫບເລີບູຮານ*

ຊື່ເຢໂຫວາ (ຫລືອອກສຽງຢາເວ ດັ່ງສະບັບ*ເຈເຣິຊາເລມ ໄບເບິນ*ຂອງໂລແມງກາໂຕລິກແລະຜູ້ຊ່ຽວຊານບາງຄົນມັກໃຊ້ກັນ) ມີເກືອບ 7.000 ເທື່ອໃນຄຳພີດັ້ງເດີມພາກພາສາເຫບເລີ. ຄຳພີໄບເບິນສະບັບແປສ່ວນຫລາຍບໍ່ມີຊື່ນັ້ນແຕ່ໃຊ້ຄຳວ່າ "ພະເຈົ້າ" ຫລື "ພະອົງເຈົ້າ" ແທນ. ຢ່າງໃດກໍຕາມ ໃນຄຳພີໄບເບິນທີ່ຂຽນເປັນໂຕຫນັງສືລາແຕງ ເຮົາສາມາດບອກໄດ້ວ່າບ່ອນໃດແດ່ໃນຕົ້ນສະບັບພາສາເຫບເລີໃຊ້ຊື່ເຢໂຫວາ ເພາະວ່າຄຳທີ່ເອົາມາແທນຈະເປັນໂຕຂຽນໃຫຍ່: ດັ່ງນີ້ GOD ແລະ LORD ຕົ້ນສະບັບສະໄຫມໃຫມ່ຫລາຍສະບັບຈະໃຊ້ຄຳເຢໂຫວາຫລືອອກສຽງຢາເວ. ສະນັ້ນ ທີ່ເອຊາອີ 42:8 ໃນພະຄຳພີລາວຈຶ່ງອ່ານວ່າ "ເຮົາແມ່ນພະເຢໂຫວາ. ອັນນີ້ນາມຊື່ຂອງເຮົາ."

ຊື່ຂອງພະຍານພະເຢໂຫວາເອົາມາຈາກພະຄຳພີໃນພະທຳເອຊາອີບົດ 43. ໃນບົດນັ້ນເປັນສາກເຫດການຂອງໂລກຄືກັບການພິຈາລະນາຄະດີໃນສານ: ພະເຈົ້າຂອງນານາຊາດໄດ້ຮັບເຊີນໃຫ້ພາພະຍານຝ່າຍເຂົາມາພິສູດຄຳກ່າວອ້າງເລື່ອງຄວາມຊອບທຳຂອງຕົນແລະຮັບຟັງພະຍານຂອງຝ່າຍພະເຢໂຫວາແລ້ວຍອມຮັບຄວາມເປັນຈິງ. ໃນບົດນັ້ນພະເຢໂຫວາປະກາດຕໍ່ປະຊາຊົນຂອງພະອົງວ່າ "ທ່ານທັງຫລາຍເປັນພິຍານຝ່າຍເຮົາດ້ວຍກັນກັບຜູ້ຮັບໃຊ້ຂອງເຮົາທີ່ເຮົາໄດ້ເລືອກໄວ້ ເພື່ອທ່ານທັງຫລາຍຈະໄດ້ຮູ້ຈັກແລະຈະໄດ້ເຊື່ອເຮົາແລະຈະໄດ້ເຂົ້າໃຈວ່າເຮົາແມ່ນຜູ້ສະເຫມີກັນ. ກ່ອນເຮົາບໍ່ມີພະເຈົ້າເປັນທີ່ແຕ່ງໄວ້ສັກອົງ ແລະພາຍຫລັງເຮົາຈະບໍ່ມີ. ຝ່າຍເຮົາເຮົາແມ່ນພະເຢໂຫວາແລະນອກຈາກເຮົາບໍ່ມີຜູ້ໃດຊ່ອຍໃຫ້ພົ້ນ." —ເອຊາອີ 43:10, 11.

*ຊື່ນີ້ກ່ຽວຂ້ອງກັບການພິຈາລະນາຄະດີໃນສານ*

ພະເຢໂຫວາພະເຈົ້າມີພະຍານຢູ່ໃນໂລກນີ້ເປັນໄລຍະຫລາຍພັນປີກ່ອນພະເຍຊູເກີດ. ໃນພະທຳເຫບເລີບົດ 11 ຫລັງຈາກໄດ້ກ່າວເຖິງລາຍຊື່ຂອງລາງຄົນທີ່ມີຄວາມເຊື່ອແລ້ວເຫບເລີ 12:1 ກ່າວວ່າ "ເຫດສັນນີ້ ເຮົາທັງຫລາຍທັງມວນເພາະມີຝູງພິຍານຝູງໃຫຍ່ຢ່າງນັ້ນລ້ອມຮອບພວກເຮົາໄວ້ ຂອງຫນັກທຸກສິ່ງແລະການບາບທີ່ຕິດງ່າຍກັບເຮົາທັງຫລາຍນັ້ນພວກເຮົາຈົ່ງຖິ້ມເສຍ ແລະການແລ່ນເສັງກັນທີ່ຕັ້ງໄວ້ຕໍ່ຫນ້າເຮົາທັງຫລາຍນັ້ນພວກເຮົາຈົ່ງແລ່ນດ້ວຍຄວາມພຽນ." ພະເຍຊູກ່າວກັບປົນເຊພີລາດວ່າ "ເຮົາໄດ້ເກີດມາສຳລັບການນີ້ ແລະເຮົາໄດ້ມາໃນໂລກສຳລັບການນີ້ ເພື່ອຈະເປັນພິຍານຝ່າຍຄວາມຈິງ." ມີການເອີ້ນພະອົງວ່າ "ພິຍານອົງສັດຊື່ແລະຈິງ." (ໂຢຮັນ 18:37; ຄຳປາກົດ 3:14) ພະເຍຊູບອກສາວົກຂອງພະອົງວ່າ "ພວກທ່ານຈະຮັບອຳນາດແລະຈະເປັນພິຍານຝ່າຍເຮົາໃນເມືອງເຢຣຶຊາເລມແລະທົ່ວໄປໃນແຂວງຢູເດ ແລະໃນແຂວງສະມາລີ ແລະໄປເຖິງທີ່ສຸດແຜ່ນດິນໂລກ." —ກິດຈະການ 1:8.

*ມີພະຍານປະມານ 6.000.000 ຄົນໃນ 230 ກວ່າດິນແດນ*

ສະນັ້ນ ໃນທຸກມື້ນີ້ປະມານ 6.000.000 ຄົນໃນ 230 ກວ່າດິນແດນ ທີ່ກຳລັງບອກຂ່າວດີເລື່ອງລາຊະອານາຈັກຂອງພະເຢໂຫວາໂດຍທາງພະເຍຊູຄລິດ ເຫັນວ່າເຫມາະສົມແລ້ວທີ່ຈະເອີ້ນຕົນເອງວ່າ ພະຍານພະເຢໂຫວາ.

